ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1232 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2023

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຂັ້ນຄຸ້ມຄອງໂຮງງານ

- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 048/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1114/ກອຫ.ຄຣ, ລົງວັນທີ 03 ກໍລະກົດ 2023.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດສິດ ແລະ ໜ້າທີ່ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນການອະນຸຍາດສ້າງຕັ້ງໂຮງງານ, ດຳເນີນກິດຈະການ, ຕໍ່ອາຍຸ, ຂະຫຍາຍໂຮງງານ, ຮັບຮອງແຜນການເຄື່ອນໄຫວປະຈຳປີ, ຢັ້ງຢືນຜະລິດຕະພັນໂຮງງານ ແລະ ການຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ແລະ ປ່ອຍສິ່ງເສດເຫຼືອໂຮງງານ ລວມທັງການຕິດຕາມກວດກາ ມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະພາບການດຳເນີນກິດຈະການຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

**ມາດຕາ 2 ການແບ່ງຂັ້ນຄຸ້ມຄອງໂຮງງານ**

ການແບ່ງຂັ້ນຄຸ້ມຄອງໂຮງງານ ປະກອບມີ 3 ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 3 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ນິຕິກຳ ກ່ຽວກັບວຽກງານຄຸ້ມຄອງໂຮງງານ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້, ນະໂຍບາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໂຮງງານ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

3. ອອກ ແລະ ລຶບລ້າງ ໃບອະນຸຍາດສ້າງຕັ້ງໂຮງງານຂະໜາດໃຫຍ່ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ;

4. ອອກ, ໂຈະ ແລະ ຖອນ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍ ໂຮງງານຂະໜາດໃຫຍ່ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ;

5. ອອກ, ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກທຸກຂະໜາດ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ;

6. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານຂະໜາດໃຫຍ່ ແລະ ໂຮງງານປະກອບຍານພາຫະນະທາງບົກທຸກຂະໜາດ;

7. ອອກໃບຢັ້ງຢືນຜະລິດຕະພັນຂອງໂຮງງານຂະໜາດໃຫຍ່ ແລະ ຜະລິດຕະພັນຍານພາຫະນະທາງບົກທຸກຂະໜາດ;

8. ອອກໃບຢັ້ງຢືນລະບົບບຳບັດ ແລະ ການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານຂະໜາດໃຫຍ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ຄຸ້ມຄອງ, ຕິດຕາມ ກວດກາ ມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະພາບການດຳເນີນກິດຈະການໂຮງງານທຸກຂະໜາດ ໃນຂອບເຂດທົ່ວປະເທດ;

10. ປະເມີນຜົນ, ສັງລວມ ແລະ ລາຍງານ ສະພາບການເຄື່ອນໄຫວ ການດຳເນີນກິດຈະການ, ມາດຕະຖານເຕັກນິກໂຮງງານ, ແຜນການເຄື່ອນໄຫວປະຈຳປີ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະຖິຕິ ໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປະຈຳ ຫົກເດືອນ ແລະ ໜຶ່ງປີ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 4 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້, ນະໂຍບາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໂຮງງານ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ອອກ ແລະ ລຶບລ້າງ ໃບອະນຸຍາດສ້າງຕັ້ງໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

3. ອອກ, ໂຈະ ແລະ ຖອນ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍ ໂຮງງານຂະໜາດກາງ, ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ, ຍົກເວັ້ນ ໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກທຸກຂະໜາດ;

4. ອອກໃບຢັ້ງຢືນຜະລິດຕະພັນຂອງໂຮງງານຂະໜາດກາງ, ຍົກເວັ້ນ ຜະລິດຕະພັນຍານພາຫະນະທາງບົກທຸກປະເພດ;

5. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານຂະໜາດກາງ, ຍົກເວັ້ນ ໂຮງງານປະກອບຍານພາຫະນະທາງບົກທຸກຂະໜາດ;

6. ອອກໃບຢັ້ງຢືນລະບົບບຳບັດ ແລະ ການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານຂະໜາດກາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ຄຸ້ມຄອງ, ຕິດຕາມກວດກາ ມາດຕະຖານເຕັກນິກໂຮງງານ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະພາບການດຳເນີນກິດຈະການໂຮງງານທຸກຂະໜາດ ໃນຂອບເຂດ ແຂວງ, ນະຄອນຫຼວງ;

8. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວ ການດຳເນີນກິດຈະການ, ມາດຕະຖານເຕັກນິກໂຮງງານ, ແຜນການເຄື່ອນໄຫວປະຈຳປີ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະຖິຕິໂຮງງານ ແລ້ວສົ່ງໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ປະຈຳ ທຸກເດືອນ ແລະ ໜຶ່ງປີ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 5 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້, ນະໂຍບາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໂຮງງານ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

2. ອອກ, ໂຈະ ແລະ ຖອນ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍ ໂຮງງານຂະໜາດນ້ອຍ; ຮັບຮູ້ການດຳເນີນກິດຈະການໂຮງງານແບບຄອບຄົວ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ, ເຂດເສດຖະກິດພິເສດ ໃນຂອບເຂດເມືອງ, ນະຄອນ ຂອງຕົນ, ຍົກເວັ້ນ ໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກທຸກຂະໜາດ;

3. ອອກໃບຢັ້ງຢືນຜະລິດຕະພັນໂຮງງານຂະໜາດນ້ອຍ, ຍົກເວັ້ນ ຜະລິດຕະພັນຍານພາຫະນະທຸກປະເພດ;

4. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານຂະໜາດນ້ອຍ;

5. ອອກໃບຢັ້ງຢືນລະບົບບຳບັດ ແລະ ການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານຂະໜາດນ້ອຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ຄຸ້ມຄອງ, ຕິດຕາມກວດກາ ມາດຕະຖານເຕັກນິກໂຮງງານ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະພາບການດຳເນີນກິດຈະການໂຮງງານທຸກຂະໜາດ ທີ່ຕັ້ງຢູ່ໃນຂອບເຂດ ເມືອງ, ນະຄອນ ຂອງຕົນ;

7. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວ ການດຳເນີນກິດຈະການ, ມາດຕະຖານເຕັກນິກໂຮງງານ, ແຜນການເຄື່ອນໄຫວປະຈຳປີ, ສິ່ງແວດລ້ອມໂຮງງານ, ເຄມີ ແລະ ສະຖິຕິໂຮງງານ ແລ້ວສົ່ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ປະຈຳ ທຸກ ເດືອນ ແລະ ໜຶ່ງປີ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການແບ່ງຂັ້ນຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສະບັບເລກທີ 0265/ອຄ, ລົງວັນທີ 15 ມີນາ 2019.

ລັດຖະມົນຕີ

ມະໄລທອງ ກົມມະສິດ